ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 3992 / ກງ

ນະຄອນຫຼວງວຽງຈັນ, ວັນທີ 12 ທັນວາ 2023

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງສະມາຄົມປະກັນໄພແຫ່ງ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍ ການປະກັນໄພ (ສະບັບປັບປຸງ) ເລກທີ 78/ສພຊ, ລົງວັນທີ 29 ພະຈິກ 2019;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017;
- ອີງຕາມ ໜັງສືສະເໜີ ຂອງ ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ສະບັບເລກທີ 794-04/ປລປ, ລົງວັນທີ 14 ກໍລະກົດ 2023.

## ລັດຖະມົນຕີກະຊວງການເງິນ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກໍານົດນິຍາມ, ຂອບເຂດການນໍາໃຊ້, ຫຼັກການ ແລະ ລະບຽບການ ເພື່ອຄຸ້ມຄອງການດໍາເນີນການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານຂອງສະມາຄົມປະກັນໄພແຫ່ງ ສປປ ລາວ. ພ້ອມນີ້, ເພື່ອສົ່ງເສີມ ແລະ ສະໜັບສະໜູນການພົວພັນວຽກງານທີ່ຕິດພັນກັບວຽກປະກັນໄພແນໃສ່ການຄຸ້ມຄອງໃຫ້ເປັນລະບົບ ແລະ ມີປະສິດທິພາບໂດຍ ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສົນທິສັນຍາ, ພັນທະຂອງ ສປປ ລາວ ທີ່ລົງນາມກັບ ຕ່າງປະເທດ.

**ມາດຕາ 2 ສະມະຄົມປະກັນໄພ ແຫ່ງ ສປປ ລາວ**

ສະມາຄົມປະກັນໄພແຫ່ງ ສປປ ລາວ ຂຽນເປັນຕົວອັກສອນຫຍໍ້ວ່າ: ສປລ, ຂຽນເປັນພາສາອັງກິດ:

Laos Insurance Association (LIA), ຖືກສ້າງຕັ້ງຂຶ້ນຕາມກົດໝາຍ ຂອງ ສປປ ລາວ ເປັນສະມາຄົມວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ ເພື່ອເປັນຕົວແທນໃຫ້ແກ່ ບໍລິສັດປະກັນໄພທີ່ໄດ້ຮັບ ອະນຸຍາດດຳເນີນທຸລະກິດໃນ ສປປ ລາວ.

ສະມາຄົມປະກັນໄພແຫ່ງ ສປປ ລາວ ເປັນການຈັດຕັ້ງສັງຄົມ, ມີພາລະບົດບາດຄົ້ນຄ້ວາ, ສະໜັບສະໜູນ, ສົ່ງເສີມຄວາມສາມັກຄີ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງສະມາຊິກ ໃນການແກ້ໄຂບັນຫາທີ່ຕິດພັນກັບວຽກງານປະກັນໄພ, ພ້ອມນີ້ກໍ່ຊ່ວຍເຫຼືອສັງຄົມບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ; ປະກອບສ່ວນສຳຄັນໃນການສ້າງສາ ພັດທະນາປະເທດຊາດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກະຊວງການເງິນ (ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ), ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນກັບ ສະມາຄົມປະກັນໄພ ແຫ່ງ ສປປ ລາວ.

**ມາດຕາ 4 ຫຼັກການຈັດຕັ້ງປະຕິບັດ**

ຫຼັກການພື້ນຖານໃນການເຄື່ອນໄຫວ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ:

1. ເຄື່ອນໄຫວເປັນປະຈຳ ຫຼື ຕາມວາລະທີ່ໄດ້ຮັບມອບໝາຍ;
2. ທຸກການເຄື່ອນໄຫວ ແມ່ນຢູ່ພາຍໃຕ້ການຊີ້ນຳຂອງ ກະຊວງການເງິນ, ໂດຍແມ່ນກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ ເປັນເສນາທິການ;
3. ກຸ້ມຕົນເອງທາງດ້ານການເງິນ;
4. ເຄື່ອນໄຫວບໍ່ຫວັງຜົນກຳໄລ;
5. ໂປ່ງໃສ, ເປີດເຜີຍ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

## ໝວດທີ 2
## ສະມາຄົມປະກັນໄພ ແຫ່ງ ສປປ ລາວ

**ມາດຕາ 5 ຄະນະບໍລິຫານສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ຄະນະບໍລິຫານ ສປລ ຕ້ອງແມ່ນຜູ້ຕາງໜ້າຂອງສະມາຊິກສາມັນ ຂອງ ສປລ ເຊິ່ງຖືກເລືອກຕັ້ງໃນກອງປະຊຸມໃຫຍ່ ຂອງສະມາຄົມ, ມີພາລະບົດບາດນຳພາ, ຊີ້ນຳ ທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສຳຄັນຂອງສະມາຄົມ. ຄະນະບໍລິຫານ ສປລ ມີຈຳນວນ 05-09 ທ່ານ (ເຊິ່ງຕ້ອງປະກອບເປັນຈຳນວນຄີກ) ປະກອບມີ: ປະທານ 01 ທ່ານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ, ໃນນີ້ຕ້ອງປະກອບມີຕາງໜ້າ

ຈາກບໍລິສັດ ປະກັນຊີວິດ ຫຼື ບໍລິສັດປະກັນໄພທົ່ວໄປຢ່າງໜ້ອຍ 40%. ສໍາລັບອາຍຸການຂອງຄະນະບໍລິຫານ ສປລ ແມ່ນ 02 ປີ.

**ມາດຕາ 6 ສະມາຊິກສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ສະມາຊິກຂອງ ສປລ ແມ່ນບັນດາ ຜູ້ປະກັນໄພ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ໃນ ສປປ ລາວ ທີ່ມີຄວາມໝັ້ນຄົງ, ມີຄວາມຮັບຜິດຊອບຕໍ່ວຽກງານປະກັນໄພ ແລະ ມີຄວາມຕື່ນຕົວໃນການຈ່າຍເງິນບໍາລຸງຂອງສະມາຊິກ ແລະ ເຂົ້າຮ່ວມເຄື່ອນໄຫວ ດ້ວຍຄວາມສະໝັກໃຈ.

**ມາດຕາ 7 ກົດລະບຽບຂອງສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ສປລ ຕ້ອງກໍານົດກົດລະບຽບຂອງຕົນຂຶ້ນ, ເຊິ່ງປະກອບເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

1. ຈຸດປະສົງ;
2. ລະບຽບການ, ໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງ ສປລ;
3. ລະບຽບການລົງທະບຽນເປັນສະມາຊິກ ແລະ ເງື່ອນໄຂການອອກຈາກການເປັນສະມາຊິກ ສປລ;
4. ຂອບເຂດສິດ, ໜ້າທີ່ ແລະ ພັນທະ ຂອງສະມາຊິກ ສປລ;
5. ລະບຽບກ່ຽວກັບການດໍາເນີນກອງປະຊຸມຂອງ ສປລ;
6. ລະບຽບການຄຸ້ມຄອງບໍລິຫານ (ລວມທັງການຈັດຕັ້ງຄະນະຄຸ້ມຄອງ, ຈໍານວນຄະນະກໍາມະການຄຸ້ມຄອງ);
7. ລະບຽບກ່ຽວກັບບໍລິຫານ, ການເຄື່ອນໄຫວວຽກງານດ້ານການບັນຊີ ແລະ ການຄຸ້ມຄອງຊັບສິນບັດ;
8. ລະບຽບການເງິນຂອງສະມາຄົມ ເຊັ່ນ: ເງິນບໍາລຸງຄ່າທໍານຽມສະມາຊິກ, ທຶນ ແລະ ແຫຼ່ງລາຍຮັບອື່ນໆ;

ການສ້າງ ແລະ ປັບປຸງ ກົດລະບຽບຂອງ ສປລ ຕ້ອງຜ່ານການເຫັນດີ ຈາກ ສະມາຊິກຂອງສະມາຄົມ, ຮັບຮອງໂດຍ ຄະນະບໍລິຫານສະມາຄົມ ແລະ ໄດ້ຮັບການເຫັນດີ ຈາກກະຊວງການເງິນ.

**ມາດຕາ 8 ປະເພດກອງປະຊຸມ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ກອງປະຊຸມ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ ປະກອບ ສາມ ປະເພດ ຄື: ກອງປະຊຸມໃຫຍ່, ກອງປະຊຸມປະຈໍາປີ ແລະ ກອງປະຊຸມຄະນະບໍລິຫານສະມາຄົມ.

**ມາດຕາ 9 ກອງປະຊຸມໃຫຍ່ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ກອງປະຊຸມໃຫຍ່ສາມັນ ແມ່ນກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດງານຂອງຄະນະບໍລິຫານ ສປລ ສະໄໝປະຈຸບັນທີ່ພວມຈະໝົດວາລະ, ເປີດຂຶ້ນຕາມກົດລະບຽບຂອງ ສປລ ນັບແຕ່ກອງປະຊຸມໃຫຍ່ສິ້ນສຸດລົງ ແລະ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນ ຈາກກະຊວງການເງິນ, ກໍລະນີກອງປະຊຸມໃຫຍ່ຈະມີການເລືອກຕັ້ງ ຄະນະບໍລິຫານຊຸດໃໝ່ ແມ່ນ ສປລ ຕ້ອງສົ່ງປະຫວັດເປົ້າໝາຍຜູ້ລົງສະໝັກເລືອກຕັ້ງ ໃຫ້ ກະຊວງການເງິນ ຊາບລ່ວງໜ້າ 30 ວັນ ກ່ອນການເປີດກອງປະຊຸມໃຫຍ່ ເພື່ອສົ່ງໃຫ້ກະຊວງປ້ອງກັນຄວາມສະຫງົບ ກວດກາກ່ອນ. ພາຍຫລັງພິຈາລະນາເຫັນວ່າຄົບຖ້ວນ ແລະ ເໝາະສົມແລ້ວ, ກະຊວງການເງິນ ຈະອອກຂໍ້ຕົກລົງອະນຸຍາດໃຫ້ເປີດກອງປະຊຸມໃຫຍ່ ສປລ ຂຶ້ນ. ຂໍ້ຕົກລົງດັ່ງກ່າວມີຜົນສັກສິດ ພາຍໃນກໍານົດເວລາ ຫົກສິບ (60) ວັນ.

ໃນກໍລະນີ ຄົບກໍານົດເວລາການເປີດກອງປະຊຸມໃຫຍ່ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງ ສປລ, ແຕ່ ສປລ ບໍ່ສາມາດເປີດກອງປະຊຸມໄດ້, ສປລ ຕ້ອງໄດ້ເຮັດໜັງສືຂໍເລື່ອນເຖິງ ກະຊວງການເງິນ ກ່ອນຄົບກໍານົດເວລາ 30 ວັນ. ກະຊວງການເງິນ ຈະພິຈາລະນາເລື່ອນກອງປະຊຸມໃຫຍ່ໃຫ້ສະມາຄົມ ໄດ້ພຽງຄັ້ງດຽວ ແລະ ກໍານົດເວລາເລື່ອນສູງສຸດ ບໍ່ເກີນ ເກົ້າສິບ (90) ວັນ, ຖ້າໝົດກໍານົດເວລາດັ່ງກ່າວແລ້ວ ສປລ ບໍ່ສາມາດເປີດກອງປະຊຸມໃຫຍ່ໄດ້ ກະຊວງການເງິນຈະຄົ້ນຄ້ວາການແຕ່ງຕັ້ງປົ່ງຕົວ ຄະນະບໍລິຫານ ສປລ ຊຸດໃໝ່ ຫຼື ພິຈາລະນາການຍຸບເລີກ ສປລ;

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມ ທີ່ ສປລ ສາມາດເປີດກອງປະຊຸມ ເມື່ອເຫັນວ່າ ມີຄວາມຈໍາເປັນ ແລະ ຮີບດ່ວນທີ່ກ່ຽວກັບການເຄື່ອນໄຫວຂອງ ສປລ ຫຼື ເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສະມາຊິກສາມັນທັງໝົດ ຫຼື ມີສະມາຊິກຂອງຄະນະບໍລິຫານງານ ສປລ ຈໍານວນສອງສ່ວນສາມຂຶ້ນໄປກໍສາມາດເປີດກອງປະຊຸມໃຫຍ່ວິສາມັນ.

**ມາດຕາ 10 ກອງປະຊຸມປະຈໍາປີ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ກອງປະຊຸມປະຈໍາປີ ຂອງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ ແມ່ນກອງປະຊຸມສະຫຼຸບຜົນງານການເຄື່ອນໄຫວ ຂອງ ສປລ ພາຍໃນໜຶ່ງປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວໃນປີຕໍ່ໄປ, ຍ້ອງຍໍບຸກຄົນດີເດັ່ນໃນການເຄື່ອນໄຫວວຽກງານ ແລະ ບັນຫາອື່ນໆຂອງ ສປລ.

ສປລ ຕ້ອງຈັດກອງປະຊຸມປະຈໍາປີພາຍໃນຕົ້ນເດືອນທັນວາ ແລະ ສົ່ງບົດສະຫຼຸບການເຄື່ອນໄຫວປະຈໍາປີໃຫ້ກະຊວງການເງິນ ເພື່ອຊາບ ກ່ອນວັນທີ 25 ທັນວາ ຂອງທຸກປີ.

**ມາດຕາ 11 ກອງປະຊຸມ ຂອງ ຄະນະບໍລິຫານສະມາຄົມປະກັນໄພ ແຫ່ງ ສປປ ລາວ**

ກອງປະຊຸມຂອງຄະນະບໍລິຫານ ສປລ ເປີດຂຶ້ນຕາມກົດລະບຽບຂອງ ສປລ ກໍານົດ ແຕ່ຢ່າງໜ້ອຍຕ້ອງເປີດຂຶ້ນປີລະສອງຄັ້ງ ເພື່ອສະຫຼຸບ, ທົບທວນຄືນການເຄື່ອນໄຫວວຽກງານ ແລະ ສືບຕໍ່ປະຕິບັດວຽກງານໃຫ້ບັນລຸຕາມແຜນປະຈໍາປີວາງໄວ້.

ລະບຽບ, ການແຈ້ງຂ່າວກອງປະຊຸມ, ການເຂົ້າຮ່ວມກອງປະຊຸມຄະນະບໍລິຫານ ແມ່ນປະຕິບັດຕາມກົດລະບຽບຂອງ ສປລ.

**ມາດຕາ 12 ການຄຸ້ມຄອງ ແລະ ການນໍາໃຊ້ ແຫຼ່ງທຶນ**

ການຄຸ້ມຄອງ ແລະ ການນໍາໃຊ້ແຫຼ່ງທຶນ ຂອງ ສປລ ໃຫ້ປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ກົດລະບຽບຂອງ ສປລ ຮັບປະກັນລວມຍອດລາຍຈ່າຍບໍລິຫານປົກກະຕິ ບໍ່ໃຫ້ເກີນ ຊາວຫ້າສ່ວນຮ້ອຍ ຂອງແຜນລາຍຈ່າຍປະຈໍາປີ.

**ມາດຕາ 13 ການຍຸບເລີກ**

ການຍຸບເລີກ ສະມາຄົມປະກັນໄພ ແຫ່ງ ສປປ ລາວ ມີ ສອງ ກໍລະນີຄື: ກໍລະນີທີໜຶ່ງ: ກະຊວງການເງິນແຈ້ງໃຫ້ຍຸບເລີກໃນກໍລະນີໃດໜຶ່ງດັ່ງລຸ່ມນີ້:

1. ລະເມີດຂໍ້ຫ້າມຕາມ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;
2. ເຄື່ອນໄຫວລະເມີດແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກໍາຂອງລັດ ຢ່າງຮ້າຍແຮງ;
3. ບໍ່ເຄື່ອນໄຫວຢ່າງຕໍ່ເນື່ອງ ເປັນເວລາຢ່າງໜ້ອຍ 01 ປີມາແລ້ວ ຫຼື ໝົດກໍານົດວາລະເຄື່ອນໄຫວແລ້ວ ແຕ່ຍັງ

ບໍ່ຍື່ນເອກະສານຂໍຕໍ່ທະບຽນສະມາຄົມ ຫຼື ຝືນສືບຕໍ່ເຄື່ອນໄຫວ ພາຍຫຼັງທີ່ໄດ້ຮັບການແຈ້ງເຕືອນຈາກກະຊວງການເງິນ;

4. ບໍ່ມີການລາຍງານປະຈຳປີ ກ່ຽວກັບ ສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການເງິນຂອງຕົນ ໃຫ້ກະຊວງການເງິນ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 14.

ກໍລະນີທີສອງ: ສປລ ສະໝັກໃຈຍຸບເລີກເອງ ໃຫ້ປະຕິບັດດັ່ງລຸ່ມນີ້:

1. ສະມາຊິກສາມັນຂອງ ສປລ ຫຼາຍກວ່າເຄິ່ງໜຶ່ງຂອງສະມາຊິກທັງໝົດຮຽກຮ້ອງໃຫ້ຍຸບເລີກ;
2. ບໍ່ມີທຶນເພື່ອເຄື່ອນໄຫວຕໍ່ໄປ;
3. ໝົດກຳນົດເວລາການເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດລະບຽບຂອງຕົນ;
4. ໄດ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ ຢູ່ໃນກົດລະບຽບຂອງຕົນແລ້ວ.

## ໝວດທີ 3
## ສິດ, ໜ້າທີ່, ພັນທະ ແລະ ຂໍ້ຫ້າມ ສະມາຄົມປະກັນໄພ ແຫ່ງ ສປປ ລາວ

### ມາດຕາ 14 ສິດ ແລະ ໜ້າທີ່

ສິດ ແລະ ໜ້າທີ່ ຂອງ ສປລ ມີດັ່ງນີ້:

1. ປະສານສົມທົບກັບພາກລັດ ໃນການຄົ້ນຄ້ວາແກ້ໄຂບັນຫາຕ່າງໆ ທີ່ຕິດພັນກັບວຽກງານປະກັນໄພ;
2. ປະສານສົມທົບກັບພາກລັດ ໃນການຄົ້ນຄ້ວາ ແລະ ສ້າງກົນໄກ ເພື່ອຊຸກຍູ້ ສົ່ງເສີມ ນະໂຍບາຍຕ່າງໆທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດປະກັນໄພໃຫ້ແທດເໝາະກັບສະພາບເສດຖະກິດໃນແຕ່ລະໄລຍະ;
3. ຂົນຂວາຍ ແລະ ເຕົ້າໂຮມ ຜູ້ປະກັນໄພທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດໃນ ສປປ ລາວ ເຂົ້າເປັນສະມາຊິກຂອງຕົນ;
4. ປະຕິບັດວຽກງານຂອງຫ້ອງການປະກັນໄພແຫ່ງຊາດ ຕາມຫຼັກການທີ່ໄດ້ກຳນົດໃນມາດຕາ 10 ຂອງອານຸສັນຍາ 05 ວ່າດ້ວຍຂອບການຮ່ວມມືອາຊຽນດ້ານການປະກັນໄພຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ແລະ ລົດຂົນສົ່ງຂ້າມແດນແບບບັງຄັບ;
5. ປະສານສົມທົບກັບພາກລັດ ໃນການຄົ້ນຄ້ວາ, ຫຼັກສູດ ການຝຶກອົບຮົມໃຫ້ແກ່ຕົວແທນ, ນາຍໜ້າປະກັນໄພ;
6. ແຕ່ງຕັ້ງຄະນະກວດກາ ສປລ ແລະ ຜູ້ອຳນວຍການ ສປລ;
7. ສ້າງມາດຖານບໍລິສັດປະກັນໄພ ໃຫ້ມີຄຸນນະພາບດ້ານຜະລິດຕະພັນປະກັນໄພ, ການໃຫ້ບໍລິການ ແລະ ການເປັນອົງກອນທີ່ມີຄວາມໜ້າເຊື່ອຖື ເປັນທີ່ຍອມຮັບວ່າມີຄວາມໝັ້ນຄົງທາງດ້ານການເງິນ, ການບໍລິຫານໂປ່ງໃສ ແລະ ເປັນອົງກອນທີ່ມີບົດບາດສຳຄັນຕໍ່ການພັດທະນາ ເສດຖະກິດສັງຄົມຂອງປະເທດ;
8. ໂຄສະນາ, ເຜີຍແຜ່ຄວາມຮູ້, ຄວາມເຂົ້າໃຈໃນການປະກັນໄພ ໃຫ້ແກ່ປະຊາຊົນ ຮັບຮູ້ເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງການມີການປະກັນໄພ;
9. ສະເໜີຍ້ອງຍໍ ບຸກຄົນ, ນິຕິບຸກຄົນທີ່ຕິດພັນວຽກງານປະກັນໄພ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;

10. ສົ່ງເສີມໃຫ້ບັນດາສະມາຊິກ ສ້າງກິດຈະກຳເຄື່ອນໄຫວວຽກງານພັດທະນາດ້ານການປະກັນໄພ, ແລກປ່ຽນບົດຮຽນກັບບັນດາສະມາຊິກ ດ້ວຍກັນ, ຮ່ວມມືທາງດ້ານການຕະຫຼາດ ແລະ ການພັດທະນາຜະລິດຕະພັນປະກັນໄພ;
11. ສະຫຼຸບລາຍງານສະພາບການເຄື່ອນໄຫວປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ ໃຫ້ກະຊວງການເງິນຊາບຢ່າງປົກກະຕິ;
12. ນຳສະເໜີແຜນງານ, ໂຄງການ ຂອງສະມາຄົມ ເພື່ອຂໍການອະນຸມັດຈາກກະຊວງການເງິນ;
13. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ກະຊວງການເງິນ.

**ມາດຕາ 15 ພັນທະ**

ພັນທະ ຂອງ ສປລ ມີດັ່ງນີ້:

1. ດຳເນີນການຕໍ່ທະບຽນສະມາຄົມ ຕາມລະບຽບການ;
2. ນຳໃຊ້ທຶນທັງໝົດ ໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງສະມາຄົມ;
3. ປະຕິບັດຕາມກົດໝາຍ ແລະລະບຽບການຂອງລັດກ່ຽວກັບການບັນຊີ ແລະ ການກວດສອບຢ່າງເຂັ້ມງວດ;
4. ປະຕິບັດພັນທະອື່ນໆ ຕາມການກຳນົດໄວ້ໃນ ກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 16 ຂໍ້ຫ້າມ**

ຫ້າມ ສປລ ມີພຶດຕິກຳດັ່ງນີ້:

1. ຫ້າມປ່ຽນແປງ, ປ່ຽນຊື່ ຫຼື ຍົກຍ້າຍທີ່ຕັ້ງສຳນັກງານ ໄປຢູ່ບ່ອນໃໝ່ ລວມທັງການປ່ຽນແປງຂໍ້ມູນການຕິດຕໍ່ພົວພັນ ໂດຍບໍ່ແຈ້ງກະຊວງການເງິນຊາບ;
2. ນຳໃຊ້ເງິນບຳລຸງສະມາຄົມ ໂດຍບໍ່ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍທີ່ກຳນົດໄວ້ໃນລະບຽບຂອງສະມາຄົມ;
3. ເຄື່ອນໄຫວໃນສິ່ງທີ່ເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດລາວ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດທິພື້ນຖານຂອງພົນລະເມືອງລາວ, ສິດເສລີພາບຂອງບຸກຄົນອື່ນ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;
4. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃຫ້ຢືມ ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ສະມາຄົມປະກັນໄພ ແຫ່ງ ສປປ ລາວ ດ້ວຍຮູບການໃດກໍ່ຕາມ;
5. ກີດກັນ ຫຼື ຂັດຂວາງ ຜູ້ປະກັນໄພ ທີ່ມີເງື່ອນໄຂຄົບຖ້ວນ ທີ່ຂໍເຂົ້າເປັນສະມາຊິກ ຫຼື ບັງຄັບໃຫ້ຫົວໜ່ວຍດັ່ງກ່າວເຂົ້າເປັນສະມາຊິກດ້ວຍຄວາມບໍ່ສະໝັກໃຈ ຫຼື ໃຫ້ສະມາຊິກອອກໂດຍບໍ່ມີເຫດຜົນອັນສົມຄວນ;
6. ເຄື່ອນໄຫວຕ່າງໆ ທີ່ຂັດກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຫຼື ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ, ສັ່ງໂຈະ, ຍຸບເລີກ ຫຼື ດຳເນີນຄະດີຕາມສະຖານເບົາ ຫຼື ໜັກ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 19 ສັນຍາລັກ ແລະ ຕາປະທັບ**

ສະມາຄົມປະກັນ ແຫ່ງ ສປປ ລາວ ມີກາໝາຍສັນຍາລັກສະເພາະຂອງຕົນ ໂດຍແມ່ນພາກສ່ວນກ່ຽວຂ້ອງເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສະມາຄົມປະກັນໄພ ແຫ່ງ ສປປ ລາວ ມີຕາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ໂດຍແມ່ນກະຊວງການເງິນ (ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ) ເປັນຜູ້ສະເໜີຫາ ກະຊວງປ້ອງກັນຄວາມສະຫງົບ ເພື່ອອະນຸມັດ ແລະ ຄວັດຕາປະທັບດັ່ງກ່າວ. ສຳລັບຮູບແບບຕາປະທັບ ແມ່ນ ໃຫ້ປະຕິບັດຕາມດຳລັດວ່າດ້ວຍຕາປະທັບ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ສະມາຄົມປະກັນໄພ ແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ